


# ພັນທະມິດການຮຽນຮູ້ລະບົບນິເວດກະສິກຳໃນເອເຊຍຕາອອກ ສຽງໃຕ້

## ການລິເລີ່ມໃນພາກພື້ນທີ່ປ່ຽນແປງໃໝ່

ການເພີ່ມຂຶ້ນຂອງພົນລະເມືອງຢ່າງໄວວາແມ່ນໄດ້ເພີ່ມໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດການ ເພີ່ມຂຶ້ນຂອງພົນລະເມືອງຢ່າງໄວວາແມ່ນໄດ້ເພີ່ມໄພຂົ່ມຂູ່ຕໍ່ຊັບພະຍາກອນທຳມະຊາດ ແລະ ການປ່ຽນແປງດິນຟ້າອາກາດ ມີຜົນກະທົບຕໍ່ການພັດທະນາກະສິກຳໃນພາກເອເຊຍຕາເວັນອອກສ່ຽງໃຕ້ຫຼາຍຂຶ້ນເລື້ອຍໆ. ການຈັດຕັ້ງປະຕິບັດກິດຈະກຳກ່ຽວກັບລະບົບນິເວດກະສິກຳແມ່ນທາງເລືອກທີ່ເຊື່ອຖືໄດ້ ເພື່ອຕອບສະໜອງລະບົບອາຫານກະສິກຳໃນປະຈຸບັນ.

ເຖິງແມ່ນວ່າຈະມີການລິເລີ້ມຢ່າງຫຼວງຫຼາຍໃນການສະໜັບສະໜູນການພັດທະນານິເວດກະສິກຳ ແລະ ມີຜູ້ກ່ຽວຂ້ອງໃນທ້ອງຖິ່ນໃນພາກພື້ນແມ່ນ້ຳຂອງກໍ່ຕາມ, ແຕ່ນີ້ແມ່ນຄວາມພະຍາຍາມຄັ້ງທຳອິດເພື່ອປ່ຽນແປງໃໝ່ໃນລະດັບຊາດ ແລະ ພາກພື້ນ ເພື່ອສ້າງໃຫ້ເປັນພັນທະມິດທີ່ເຂັ້ມແຂງຂອງພາກສ່ວນທີ່ກ່ຽວຂ້ອງໃນລະດັບທີ່ແຕກຕ່າງກັນ ໂດຍຈາກອົງກອນຊາວກະສິກອນໃຫ້ກາຍເປັນສູນຄົ້ນຄ້ວາວິໃຈລະດັບຊາດ ແລະ ພາກພື້ນ, ໂດຍໃຫ້ລວມມີພາກສ່ວນເອກະຊົນທີ່ສາມາດເສີມສ້າງນະໂຍບາຍ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງໃຫ້ເຂັ້ມແຂງໃນການຜະລິດກະສິກຳແບບຍືນຍົງໃຫ້ກ້ວາງຂວາງ.

## ການຕິດຕາມຂະບວນການປຶກສາຫາລື ຂອງພາກສ່ວນຂອງພາກສ່ວນທີ່ກ່ຽວຂ້ອງ ທີ່ສຳຄັນ

ກ່ອນຈະເລີ່ມຕົ້ນໂຄງການ ໄດ້ລວບລວມທວນຄືນທິດສະດີທີ່ກ່ຽວຂ້ອງ ໂດຍການຈັດກອງປະຊຸມປຶກສາຫາລືຢູ່ແຕ່ລະປະເທດ (ກຳປູເຈຍ, ສປປລາວ, ພະມ້າ ແລະ ຫວຽດນາມ). ໃນນີ້ ປະ ກອບມີບົດນຳສະເໜີ ແລະ ການປຶກສາຫາລືກ່ຽວກັບຜົນໃນເບື້ອງຕົ້ນ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງກັບນິເວດກະສິກຳໃນແຕ່ລະປະເທດ.

ຄູ່ຮ່ວມງານທີ່ມີທ່າແຮງທັງໝົດມີ 118 ພາກສ່ວນ( ເຊັ່ນ: ອົງການທີ່ບໍ່ຂຶ້ນກັບລັດຖະບານ, ອົງການຄົ້ນຄ້ວາວິໄຈ, ອົງການລັດຖະບານ, ບໍລິສັດສ່ວນບຸກຄົນ) ໃນ 4 ປະເທດເປົ້າໝາຍທີ່ໄດ້ກຳນົດໄວ້ ແລະ ຄາດໝາຍໃຫ້ເປັນເຄືອຂ່າຍໃນອະນາຄົດທີ່ມີປະສົບການຫຼາກຫຼາຍກ່ຽວກັບ (ກະສິກຳແບບອະນລັກ, ກະສິກຳປ່າໄມ້, ການປູກເຂົ້າໂດຍໃຊ້ກ້າກົບດຽ, ການຈັດການສັດຕູພືດແບບປະສົມປະສານ, ກະສິກຳອິນຊີ, ກະສິກຳປະສົມປະສານ......ອື່ນໆ).



### ຈຸດປະສົງຂອງ ALiSEA

- ເພື່ອລິເລີ່ມກັບພາກສ່ວນທີ່ກ່ຽວຂ້ອງແລກປ່ຽນປະສົບການ ແລະ ຄວາມຮູ້ທີ່ເຂັ້ມແຂງກ່ຽວກັບ ລະບົບນິເວດກະສິກຳ.
- ພື່ອເພີ້ມຄວາມຊັດເຈນ ແລະ ຄວາມເຊື່ອໝັ້ນໃນການປ່ຽນແປງກ້າວໄປສູ່ຜູ້ບໍລິໂພກ ແລະ ຜູ້ສ້າງນະໂຍບາຍກ່ຽວກັບນິເວດກະສິກຳ.
- ເພີ່ມທະວີການພັດທະນາ ແລະ ການຮັບຮອງເອົາການປະຕິບັດນິເວດກະສິກຳ.

### ສະມາຄົມຮ່ວມກັບ CIRAD

ALiSEA ເປັນໂຄງການໜຶ່ງໃນແຜນງານ: ການສະໜັບສະໜູນການປ່ຽນແປງນິເວດກະສິກຳໃນພາກພື້ນແມ່ນ້ຳຂອງ (ACTAE), ໂຄງການນີ້ຮ່ວມມືກັບ CIRAD ເຊິ່ງເປັນຜູ້ຮັບຜິດຊອບໂຄງການທີ່ກ່ຽວກັບເຄືອຂ່າຍກະສິກຳແບບອະນຸລັກຢູ່ໃນອາເຊຍຕາເວັນອອກສ່ຽງໃຕ້ (CANSEA)"

cirad

GRET
Professionals for Fair Development





## ຜົນສຳເລັດຕົ້ນຕໍ່ໃນປະຈຸບັນ

> ການເລີ່ມຕົ້ນຂອງເຄືອຄ່າຍລະດັບພາກພື້ນຂອງ 60 ສະມາຊິກທີ່ເຮັດວຽກກ່ຽວກັບນິເວດກະສິກຳ.

>ການສ້າງເວທີ່ການສົນທະນາໃນລະດັບພາກພື້ນດ້ານນິເວດກະສິກຳໃນຮູບແບບອອນລາຍ (http://ali-sea.org) ຊຶ່ງຈະຊ່ວຍໃຫ້ສາມາດເຂົ້າເຖິງແຫຼ່ງຂໍ້ມູນຂ່າວສານອອນໄລຫຼາຍກວ່າ 200 ແຫຼ່ງຂໍ້ມູນຂ່າວສານ ແລະ 34 ກໍລະນີສຶກສາກ່ຽວກັບການປະຕິບັດ, ປະສົບການ ແລະ ລະບົບເຄືອຄ່າຍຂອງນິເວດກະສິກຳໃນ 4 ປະເທດ.

> ການກສ້າງໜ້າແຟດບກ Facebook ແບບໄດນາມິກ Agro-ecological Learning Alliance ເຊິ່ງຈະມີການອັບເດດທຸກມື້ດ້ວຍວິດີໂອ, ບົດຄວາມ, ຂ່າວ, ອື່ນໆ.

> ຈັດກອງປະຊຸມເພື່ອແບ່ງປັນປະສົບການ, ການເຊື່ອມຕໍ່ຊ່ອງຫ່ວາງ ແລະ ການກະຕຸ້ນການຮ່ວມມື ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງລະດັບຊາດ ຈຳນວນ 4 ຄັ້ງ. (ເດືອນ ມີນາ ຫາ ເດືອນ ມິຖຸນາ 2016).

> ການຈັດປະຊຸມວິຊາການດ້ານນິເວດກະສິກຳລະດັບພາກພື້ນທີ່ ພະມ້າ (ເດືອນມັງກອນ ປີ 2017)

>ຈັດຕັ້ງຄະນະກຳມະການຜູ້ຊ່ຽວຊານໃນແຕ່ລະປະເທດ.

>ເປີດຮັບບົດສະເໜີໂຄງການ 2 ຄັ້ງ ພາຍໃຕ້ໂຄງການການສະໜອງທຶນຂະໜາດນ້ອຍຂອງ ALiSEA ເຊິ່ງຈຳນວນ 12 ທຶນຂະໜາດນ້ອຍທີ່ໄດ້ຮັບເຂົ້າຮອບການຄັດເລືອກໃນຮັບບົດສະເໜີໂຄງການຄັ້ງທີ່ 1 ໂດຍມີວັດຖຸປະສົງເພື່ອສ້າງ ແລະ ແລກປ່ຽນຄວາມຮູ້ດ້ານນິເວດກະສິກຳ.

>ການຈັດປະຊຸມສາມັນປະຈຳປີຄັ້ງທຳອິດຂອງ ALiSEA ໃນປະເທດກຳປູເຈຍໂດຍມີຜູ້ເຂົ້າຮ່ວມເຖິງ 60 ທ່ານເຊິ່ງແມ່ນພາກສ່ວນກ່ຽວຂອ້ງໃນລະດັບຊາດ.

### ຮູບແບບການຄຸ້ມຄອງ ALiSEA

ໃນລະດັບຊາດ ( 4 ປະເທດ)

ເລຂາທິການແຫ່ງຊາດ: ເປັນເຈົ້າພາບໂດຍສະຖາບັນທີເປັນສະມາຊິກໃນເຄືອຂ່າຍທີມີສ່ວນຮ່ວມກັນໃນວຽກງານການເອົາກິດຈະກຳເຂົ້າມາຊ່ວຍແກ້ໄຂບັນຫາ

ຄະນະກຳມະການຜູ້ຊ່ຽວຊານແຫ່ງຊາດ: ນັກວິທະຍາສາດ ແລະ ຜູຊ່ຽວຊານດ້ານການພັດທະນາທີ່ໄດ້ຮັບການຍອມຮັບ ເພື່ອເຂົ້າມາຊ່ວຍເຊື່ອມຕໍ່ໃຫ້ຊຸມຊົນວິທະຍາສາດ/ວິຊາການກັບຜູ້ຊ່ຽວຊານດ້ານການພັດທະນາ

ການປະຊຸມສາມັນປະຈຳປີ: ເປັນຊ່ວງເວລາທີ່ສ້າງແຮງບັນດານໃຈເພື່ອນຳສະເໜີຄວາມຄືບໜ້າຫຼັກໆທີ່ດຳເນີນການໃນລະຫ່ວາງປີ ເພື່ອເສີມສ້າງການປ່ຽນແປງທາງດ້ານນິເວດກະສິກຳ ແລະ ສູມໃສ່ຮູບແບບການຄຸ້ມຄອງຂອງ ALiSEA ແລະ ປຶກສາຫາລືກ່ຽວກັບແຜນປະຕິບັດການຂອງຍຸດທະສາດໃໝ່.

ໃນລະດັບພາກພື້ນ

ເລຂາທິການລະດັບພາກພື້ນ: ປະຈບັນເປັນເຈົ້າພາບ ແລະ ອຳນວຍຄວາມສະດວກໂດຍຫ້ອງການ GRET ກັບຜູ້ປະສານງານລະດັບພາກພື້ນໜຶ່ງທ່ານໃນປະເທດລາວ ແລະ ຜູ້ປະສານງານລະດັບຊາດສອງທ່ານຈາກປະເທດກຳປູເຈຍ ແລະ ພະມ້າ.

ການປະຊຸມສາມັນລະດັບພາກພື້ນ:ຈະໄດ້ຈັດຂຶ້ນໜຶ່ງຄັ້ງທກງສອງປີເພື່ອເປັນການຍົກລະດັບຈຸດປະສົງເປົ້າໝາຍຂອງວຽກສະພາບໍລິຫານຕໍ່ພາກພື້ນແມ່ນ້ຳຂອງ.



## Agroecology Schools



ການເຮັດນ້ຳຢາປາບສັດຕູພືດດ້ວຍໃບນີມ/ກະເດົາ



ລະບົບການປູກເຂົ້າກ້າກັບດຽວ



ກະສິກຳປ່າໄມ້



ກະສິກຳປອດສານພິດ



ການກະສິກຳປະສົມປະສານ



ກະສິກຳໃນຮູບແບບອະນຸລັກ

**1.2 MILLIONS EUROS FUNDED BY :**

AFD

*The present project is supported by the French Agency for Development . The ideas and the presented opinions are the ones of its organization and do not represent necessarily those of the AFD.*

**CONTACTS :**

**www.ali-sea.org**


**ALiSEA Team:** agroecologynetworksea@gmail.com

**Regional ALiSEA Coordinator**: Mr Pierre Ferrand, ferrand@gret.org

**Cambodia ALiSEA Coordinator**: Ms Lucie Reynaud, reynaud@gret.org

**Myanmar ALiSEA Coordinator**: Dr Htet Kyu, htetkyu@gret.org


*Operating in Lao PDR since 2005, Gret is a French development NGO which for 40 years has been acting from the terrain to the policy, to fight against the poverty and the inequalities.*

Lao PDR

GRET